ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110



# ພິທີປະກາດການປັບປຸງການຈັດຕັ້ງ ລະດັບການນຳຫຼັກແຫຼ່ງ ຂອງຂະແໜງທະນາຄານ




ໃນຕອນບ່າຍຂອງວັນທີ 24 ທັນວາ 2024 ທີ່ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງພິທີປະກາດການປັບປຸງການຈັດຕັ້ງຂັ້ນຄະນະກົມ ແລະ ທຽບເທົ່າ ຢູ່ ທຫລ, ຜູ້ອຳນວຍການ ທະນາຄານນະໂຍບາຍ ແລະ ຜູ້ອຳນວຍການ ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ. ໂດຍການໃຫ້ກຽດເປັນປະທານຂອງ ທ່ານ ນາງ ຂັນແກ້ວ ຫຼ້າມະນີເງົາ ກຳມະການປະຈຳພັກ, ປະທານຄະນະກວດກາພັກ, ຮອງຜູ້ວ່າການ ທຫລ, ມີບັນດາຄະນະກົມ ແລະ ທຽບເທົ່າ, ພະນັກງານຫຼັກແຫຼ່ງຂອງ ທຫລ, ຜູ້ຕາງໜ້າຈາກກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີດັ່ງກ່າວ, ທ່ານ ຄຳແກ້ວ ວິສີສົມບັດ ຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ ໄດ້ຕາງໜ້າບັນດາກົມກອງທີ່ໄດ້ຮັບການປັບປຸງ (ກົມກວດກາ, ກົມຄຸ້ມຄອງທະນາຄານທຸລະກິດ, ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ, ທະນາຄານນະໂຍບາຍ ແລະ ບໍລິສັດຕະຫຼາດຫຼັກຊັບລາວ ຈຳກັດ) ສະຫຼຸບຫຍໍ້ ການເຄື່ອນໄຫວວຽກງານປະຈຳເດືອນ ພະຈິກ 2024 ແລະ ທິດທາງແຜນການໃນຕໍ່ໜ້າ; ຈາກນັ້ນ, ທ່ານ ນາງ ໂພທິຈັນ ທຳມະເທວາ ຫົວໜ້າກົມຈັດຕັ້ງແລະພະນັກງານ, ທຫລ ໄດ້ປະກາດການຕົກລົງຂອງຂັ້ນເທິງທີ່ກ່ຽວຂ້ອງ ຈຳນວນ 5 ຕຳແໜ່ງງານ, ມີຄືດັ່ງນີ້:

1. ຍົກຍ້າຍ ທ່ານ ວິສອນ ໄຊສີງຄາມ ຜູ້ອຳນວຍການ ທະນາຄານນະໂຍບາຍ ແລະ ແຕ່ງຕັ້ງເປັນ ຫົວໜ້າກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ;

2. ຍົກຍ້າຍ ທ່ານ ສຸພັກ ຖິ່ນໄຊພອນ ຜູ້ອຳນວຍການ ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ ແລະ ແຕ່ງຕັ້ງເປັນ ຜູ້ອຳນວຍການທະນາຄານນະໂຍບາຍ;

3. ຍົກຍ້າຍ ທ່ານ ສຽວສະຫວາດ ທິລະກຸນ ຮອງຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ແຕ່ງຕັ້ງເປັນ ຜູ້ອຳນວຍການ ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ;

4. ຍົກຍ້າຍ ທ່ານ ບົວຈັນ ແກ້ວມະນີ ຮອງຫົວໜ້າກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ແລະ ແຕ່ງຕັ້ງເປັນຮອງຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ;

5. ແຕ່ງຕັ້ງ ທ່ານ ນາງ ດາວັນ ເທບພະວົງ ຫົວໜ້າພະແນກກວດກາລັດ, ກົມກວດກາ ເປັນຮອງຫົວໜ້າກົມກວດກາ.




ໃນຕອນທ້າຍຂອງພິທີ, ທ່ານປະທານກອງປະຊຸມ ໄດ້ໃຫ້ກຽດໂອ້ລົມ ໂດຍທ່ານໄດ້ໃຫ້ບັນດາທ່ານທີ່ໄດ້ຮັບການປັບປຸງໃນຄັ້ງນີ້ ຈົ່ງໄດ້ສືບຕໍ່ຍົກສູງຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງຂອງຕົນ ແລະ ເອົາໃຈໃສ່ຕໍ່ການຮັດແໜ້ນຄວາມສາມັກຄີພາຍໃນ ເພື່ອໃຫ້ການບໍລິຫານວຽກງານ ມີຄວາມຄ່ອງຕົວ ແລະ ປະສິບຜົນສໍາເລັດທີ່ດີຍິ່ງໆຂຶ້ນໄປ.

**# ຂ່າວ: ກົມຈັດຕັ້ງແລະພະນັກງານ, ທຫລ.**

**# ພາບ: ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ, ຫ້ອງການ ທຫລ.**